**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2026 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 9 ກັນຍາ 2025

# ຂໍ້ຕົກລົງ
# ວ່າດ້ວຍແບບຜັງວົງຈອນລວມ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 872/ກຄຊປ, ລົງວັນທີ 22 ສິງຫາ 2025.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບຜັງວົງຈອນລວມ ເປັນຕົ້ນ ການຈົດທະບຽນແບບຜັງວົງຈອນລວມ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ ແລະ ອື່ນໆການຄຸ້ມຄອງວຽກງານແບບຜັງວົງຈອນລວມ ເພື່ອແນໃສ່ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ແບບຜັງວົງຈອນລວມ**

ແບບຜັງວົງຈອນລວມ ແມ່ນການຈັດວາງວົງຈອນລວມ ທີ່ສະແດງອອກໃນຮູບສາມມິຕິໃດກໍຕາມ ຊຶ່ງຢ່າງໜ້ອຍມີສ່ວນປະກອບໜຶ່ງ ທີ່ໃຊ້ການໄດ້ ແລະ ສ່ວນເຊື່ອມຕໍ່ບາງສ່ວນ ຫຼື ທັງໝົດ ຂອງວົງຈອນລວມ ຫຼື ການຈັດວາງວົງຈອນລວມ ໃນຮູບແບບສາມມິຕິເຫຼົ່ານັ້ນ ເຮັດຂຶ້ນມາເປັນວົງຈອນລວມ ທີ່ມີຈຸດປະສົງສຳລັບການຜະລິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ, ຄັດຄ້ານ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ, ລຶບລ້າງ ແລະ ການສະເໜີອື່ນໆ ກ່ຽວກັບແບບຜັງວົງຈອນລວມ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

2. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ, ຄັດຄ້ານ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ, ລຶບລ້າງ ແລະ ການສະເໜີອື່ນ ກ່ຽວກັບແບບຜັງວົງຈອນລວມ;

3. **ຜູ້ຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ;

4. **ບຸກຄົນທີສາມ ທີ່ສະເໜີຂໍຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນເຈົ້າຂອງສິດ ໄດ້ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ;

5. **ການຄັດຄ້ານ** ໝາຍເຖິງ ການຍື່ນຄຳສະເໜີຂໍຄັດຄ້ານ ໂດຍບຸກຄົນທີສາມ ຕໍ່ຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ;

6. **ບຸກຄົນທີສາມ ທີ່ຍື່ນຄຳສະເໜີຂໍຍົກເລີກ ຫຼື ລຶບລ້າງ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ເປັນເຈົ້າຂອງສິດ ໄດ້ຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມ;

7. **ການຍົກເລີກ ຫຼື ລຶບລ້າງ** ໝາຍເຖິງ ການຍື່ນຄຳຮ້ອງຂໍຍົກເລີກ ຫຼື ການລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມ ໂດຍບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມ;

8. **ວົງຈອນລວມ** ໝາຍເຖິງ ຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ຊຶ່ງສ່ວນປະກອບຕ່າງໆ ຂອງຜະລິດຕະພັນ ເປັນສ່ວນປະກອບທີ່ໃຊ້ການໄດ້ ແລະ ສ່ວນທີ່ເຊື່ອມຕໍ່ກັບບາງສ່ວນ ຫຼື ທັງໝົດ ຖືກເຊື່ອມຕໍ່ປະສານຮ່ວມເຂົ້າກັນຢູ່ໃນ ແລະ/ຫຼື ຢູ່ເທິງວັດຖຸເຄິ່ງຊັກນຳໄຟຟ້າ ແລະ ຜະລິດຕະພັນນັ້ນ ມີຈຸດປະສົງປະຕິບັດໜ້າທີ່ທາງດ້ານເອເລັກໂຕຣນິກ;

9. **ນັກອອກແບບ** ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນ ທີ່ຮ່ວມກັນອອກແບບຜັງວົງຈອນລວມ ໃດໜຶ່ງ;

10. **ການແຍກຄຳຮ້ອງ** ໝາຍເຖິງ ການແຍກຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນ ດຽວອອກເປັນສອງ ຫຼື ຫຼາຍສະບັບໂດຍຜູ້ຮ້ອງຂໍ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບແບບຜັງວົງຈອນລວມທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;

11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບແບບຜັງວົງຈອນລວມ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;

12. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງຜູ້ຖືສິດ ຫຼື ເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

13. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດແບບຜັງວົງຈອນລວມ ທີ່ມອບສິດຂອງຕົນໃຫ້ ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນໃນການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫຼື ດຳເນີນການອື່ນ ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

14. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ຫຼື ທະນາຍຄວາມທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງແບບຜັງວົງຈອນລວມ ຊຶ່ງມີທີ່ຢູ່ໃນ ສປປ ລາວ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງມອບສິດຈາກເຈົ້າຂອງແບບຜັງວົງຈອນລວມ ຈາກຕ່າງປະເທດ ທີ່ບໍ່ມີທີ່ຢູ່ໃນ ສປປ ລາວ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫຼື ດຳເນີນການອື່ນ ຢູ່ກົມຊັບສິນທາງປັນຍາ;

15. **ວັນບູລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍໄດ້ຍື່ນຂໍຈົດທະບຽນ ຢູ່ຕ່າງປະເທດ, ສຳນັກງານອື່ນທີ່ກ່ຽວຂ້ອງກັບຊັບສິນທາງປັນຍາ ຫຼື ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານແບບຜັງວົງຈອນລວມ ຢູ່ ສປປ ລາວ.

## ໝວດທີ 2
## ການຈົດທະບຽນແບບຜັງວົງຈອນລວມ

**ມາດຕາ 5 ເງື່ອນໄຂທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ**

ແບບຜັງວົງຈອນລວມ ທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ແບບຜັງຕົ້ນສະບັບ ທີ່ບໍ່ຄືແບບຜັງຂອງບຸກຄົນອື່ນ ຊຶ່ງເປັນແບບທີ່ເກີດມາຈາກສະຕິປັນຍາ ຂອງຜູ້ປະດິດສ້າງ ແລະ ເປັນສິ່ງທີ່ໂດດເດັ່ນ ໃນວົງການນັກສ້າງແບບຜັງ ແລະ ຜູ້ຜະລິດວົງຈອນລວມ ໃນເວລາສ້າງແບບຜັງດັ່ງກ່າວ;

2. ແບບຜັງ ທີ່ມີການປະສານຮ່ວມກັນ ລະຫວ່າງ ສ່ວນປະກອບ ແລະ ສ່ວນເຊື່ອມຕໍ່ ຊຶ່ງໂດຍທົ່ວໄປແລ້ວຈະຕ້ອງໄດ້ຮັບການປົກປ້ອງ;

3. ຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ກ່ອນວັນນໍາເອົາແບບຜັງວົງຈອນລວມ ໄປຫາຜົນປະໂຫຍດທາງການຄ້າໃນທົ່ວໂລກ ໂດຍເຈົ້າຂອງ ຫຼື ຍື່ນຄໍາຮ້ອງຂໍຈົດທະບຽນ ພາຍໃນ ສອງປີ ນັບແຕ່ວັນໄດ້ຫາຜົນປະໂຫຍດ.

ສໍາລັບແບບຜັງວົງຈອນລວມ ທີ່ບໍ່ສາມາດໄດ້ຮັບການຈົດທະບຽນແບບຜັງວົງຈອນລວມ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນມາດຕາ 24 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 6 ການກວດຄົ້ນແບບຜັງວົງຈອນລວມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຂໍກວດຄົ້ນແບບຜັງວົງຈອນລວມ ໃຫ້ຍື່ນຄໍາຮ້ອງຕໍ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ, ໂດຍຕ້ອງລະບຸໝວດຂອງແບບຜັງວົງຈອນລວມ ທີ່ຕ້ອງການກວດຄົ້ນພ້ອມທັງຈ່າຍຄ່າບໍລິການ.

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງ, ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດຄົ້ນແບບຜັງວົງຈອນລວມ ຢູ່ໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ແລະ ແຈ້ງຜົນການກວດຄົ້ນແບບຜັງວົງຈອນລວມ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ຜົນຂອງການກວດຄົ້ນແບບຜັງວົງຈອນລວມ ບໍ່ສາມາດນໍາໃຊ້ເພື່ອຢັ້ງຢືນ ຫຼື ເປັນຫຼັກຖານໃນທາງກົດໝາຍ ເປັນພຽງແຕ່ການກວດຄົ້ນຂໍ້ມູນ ກ່ຽວກັບແບບຜັງວົງຈອນລວມ ເບື້ອງຕົ້ນເທົ່ານັ້ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດກວດຄົ້ນແບບຜັງວົງຈອນລວມດ້ວຍຕົນເອງ ໄດ້ທີ່ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ ຂອງກົມຊັບສິນທາງປັນຍາ.

**ມາດຕາ 7 ການຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຢູ່ນໍາກົມຊັບສິນທາງປັນຍາ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ໂດຍປະຕິບັດຕາມເງື່ອນໄຂຕໍ່າສຸດ ຕາມທີ່ກໍານົດໄວ້ໃນມາດຕາ 34 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ກົມຊັບສິນທາງປັນຍາ ຕ້ອງຮັບເອົາຄໍາຮ້ອງ, ອອກໃບຮັບຄໍາຮ້ອງ ຊຶ່ງລະບຸເລກທີ ແລະ ວັນທີຍື່ນຄໍາຮ້ອງ ທີ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;

3. ກົມຊັບສິນທາງປັນຍາ ຈະບໍ່ຮັບເອົາຄໍາຮ້ອງ ຖ້າຫາກບໍ່ສອດຄ່ອງຕາມເງື່ອນໄຂຕໍ່າສຸດ;

4. ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫາກມີຈຸດປະສົງຂໍຖອນຄໍາຮ້ອງ ຫຼື ຄໍາຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍໄປແລ້ວ;

5. ກໍລະນີ ທີ່ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫາກຮຽກເອົາອັນບູລິມະສິດ ຕາມທີ່ກໍານົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບອັນບູລິມະສິດແບບຜັງວົງຈອນລວມ ຫົກເດືອນ ນັບແຕ່ວັນທີ່ໄດ້ຮັບອັນບູລິມະສິດເປັນຕົ້ນໄປ, ກໍລະນີ ວັນສຸດທ້າຍຂອງໄລຍະເວລາດັ່ງກ່າວ ຫາກເປັນວັນພັກທາງລັດຖະການ ແລະ ກົມບໍ່ສາມາດຮັບຄໍາຮ້ອງໄດ້ ຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປ ຈົນເຖິງວັນລັດຖະການທໍາອິດຖັດໄປ.

**ມາດຕາ 8 ເອກະສານຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ**

ການຂໍຈົດທະບຽນແບບຜັງວົງຈອນລວມ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ກໍລະນີ ທີ່ຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າ;
3. ບົດອະທິບາຍ ກ່ຽວກັບໜ້າທີ່ ທາງດ້ານເອເລັກໂຕຣນິກ ທີ່ວົງຈອນລວມເຮັດວຽກ ຫຼື ຈຸດປະສົງເພື່ອເຮັດໃຫ້ວົງຈອນລວມເຮັດວຽກ ຖ້າວົງຈອນລວມຫາກໄດ້ຖືກນໍາໃຊ້ ເພື່ອຫາຜົນປະໂຫຍດໃນທາງການຄ້າແລ້ວ;
4. ແຜນວາດ ຂອງແບບຜັງວົງຈອນລວມ ເພື່ອສາມາດຈໍາແນກແບບຜັງ;
5. ໃບຮັບເງິນຄ່າທໍານຽມ ແລະ ຄ່າບໍລິການ.

ກໍລະນີ ຜູ້ຮ້ອງຂໍຮຽກເອົາອັນບູລິມະສິດ ໂດຍອີງໃສ່ຄໍາຮ້ອງສະບັບເດີມທີ່ຍື່ນ ຢູ່ ສປປ ລາວ ຫຼື ຕ່າງປະເທດ ຕ້ອງປະຕິບັດຕາມທີ່ກໍານົດໄວ້ໃນວັກທີ 4 ມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 9 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄໍາຮ້ອງ**

ຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຕ້ອງສະໜອງເອກະສານຕາມເງື່ອນໄຂຕໍ່າສຸດ ຕາມທີ່ກໍານົດໄວ້ໃນຂໍ້ທີ 1, 3 ແລະ 5 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10 ບົດອະທິບາຍ ກ່ຽວກັບການນໍາໃຊ້ໃນທາງການຄ້າເທື່ອທໍາອິດ**

ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຕ້ອງອະທິບາຍ ແລະ ລະບຸວັນທີຂອງການນໍາໃຊ້ແບບຜັງ ຫຼື ວົງຈອນລວມ ທີ່ໄດ້ເຊື່ອມຕໍ່ເຂົ້າກັນ ເພື່ອດໍາເນີນການທາງການຄ້າຄັ້ງທໍາອິດ, ການນໍາໃຊ້ແບບຜັງ ຫຼື ວົງຈອນລວມ ໃນທາງການຄ້າຄັ້ງທໍາອິດ ກ່ອນການຂາຍ, ການໃຫ້ເຊົ່າ, ການເຊົ່າ-ຊື້ ຫຼື ການເຮັດທຸລະກໍາອື່ນທີ່ກ່ຽວຂ້ອງກັບວົງຈອນລວມ ທີ່ສ້າງຂຶ້ນຈາກແບບຜັງ ຫຼື ຈຸດປະສົງໃດໜຶ່ງ ໃນການປະກອບເຂົ້າກັນເພື່ອການດໍາເນີນທຸລະກິດ ຫຼື ການເຮັດທຸລະກໍາ.

ຖ້າຫາກສ້າງແບບຜັງວົງຈອນລວມ ຂຶ້ນມາແຕ່ບໍ່ໄດ້ນໍາໃຊ້ໃນທາງການຄ້າ, ຜູ້ຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ກໍຕ້ອງລະບຸໃສ່ຄໍາຮ້ອງໃຫ້ຈະແຈ້ງ. ຊຶ່ງການນໍາໃຊ້ແບບຜັງວົງຈອນລວມ ໃນທາງການຄ້າ ກໍບໍ່ແມ່ນເງື່ອນໄຂເພື່ອໃຫ້ໄດ້ຮັບການປົກປ້ອງ.

**ມາດຕາ 11 ແຜນວາດ**

ແຜນວາດ ຫຼື ຮູບຖ່າຍແຜນວາດຂອງແບບຜັງວົງຈອນລວມ ຕ້ອງມີຂະໜາດເໝາະສົມ ຕໍ່າສຸດບໍ່ໃຫ້ຫຼຸດຂະໜາດເຈ້ຍ A4 ແລະ ໃຫຍ່ສຸດ ບໍ່ໃຫ້ເກີນຂະໜາດເຈ້ຍ A2 ໂດຍລະບຸຫົວຂໍ້ ແລະ ເລກທີຂອງແຕ່ລະແຜນວາດ.

ແຜນວາດ ຫຼື ຮູບຖ່າຍ ຕ້ອງສະແດງໃຫ້ເຫັນແບບຜັງວົງຈອນລວມຢ່າງຈະແຈ້ງ ເພື່ອຊີ້ໃຫ້ເຫັນສ່ວນທີ່ມີການເຊື່ອມຕໍ່ກັນຂອງວົງຈອນລວມ ຊຶ່ງຖືກນໍາໃຊ້ເຂົ້າໃນຂະບວນການຜະລິດ ທີ່ໃກ້ຈະເປັນຜະລິດຕະພັນສໍາເລັດຮູບ.

ກໍລະນີ ແຜນວາດ ຫຼື ຮູບຖ່າຍ ເປັນຮູບສາມມິຕິ ຕ້ອງປະກອບມີ ແຜນວາດໂດຍລວມ ແລະ ຕ້ອງສະແດງໃຫ້ເຫັນຢ່າງຈະແຈ້ງ ໃນລາຍລະອຽດທັງໝົດຂອງແບບຜັງນັ້ນ ເພື່ອສາມາດຈໍາແນກໄດ້ລັກສະນະທີ່ແຕກຕ່າງກັນຂອງແບບຜັງວົງຈອນລວມ.

ກໍລະນີ ແຜນວາດທີ່ຍື່ນນໍາກົມຊັບສິນທາງປັນຍາ ຖ້າຫາກບໍ່ຈະແຈ້ງຊັດເຈນ ກົມຕ້ອງແຈ້ງໃຫ້ຜູ້ຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ເພື່ອສະໜອງແຜນວາດທີ່ມີຄວາມຈະແຈ້ງຄືນໃໝ່.

ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ສາມາດສະໜອງຮູບແຕ້ມ, ຮູບຖ່າຍ ຫຼື ຮູບພາບຂອງແບບຜັງວົງຈອນລວມ ໃນຮູບແບບເອເລັກໂຕຣນິກກໍ່ໄດ້.

**ມາດຕາ 12 ຫຼັກການພິຈາລະນາຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ**

ການພິຈາລະນາຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຕ້ອງປະຕິບັດຕາມຫຼັກການທີ່ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຖ້າຫາກການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມມີຫຼາຍສະບັບ ໃນໄລຍະດຽວກັນທີ່ເປັນແບບດຽວກັນ ຫຼື ຄ້າຍຄືກັນ ສຳລັບປະເພດແບບຜັງວົງຈອນລວມດຽວກັນ ຫຼື ຄ້າຍຄືກັນ ໃຫ້ພິຈາລະນາຄຳຮ້ອງ ທີ່ມີວັນບຸລິມະສິດກ່ອນ. ກໍລະນີ ກົມຊັບສິນທາງປັນຍາໄດ້ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງແລ້ວ ໃຫ້ຈົດທະບຽນຄຳຮ້ອງແບບຜັງວົງຈອນລວມ ທີ່ໄດ້ຮັບວັນບຸລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດ ຄຳຮ້ອງທີ່ໄດ້ຮັບວັນບຸລິມະສິດຕາມຫຼັງ. ຖ້າຫາກການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບຸລິມະສິດຕາມຫຼັງນັ້ນ ຫາກສຳເລັດກ່ອນ ແລະ ຄຳຮ້ອງດັ່ງກ່າວ ມີເງື່ອນໄຂໃນການໄດ້ຮັບການຈົດທະບຽນ, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄຳຮ້ອງນັ້ນໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບຸລິມະສິດກ່ອນນັ້ນສິ້ນສຸດລົງ.

ກົມຊັບສິນທາງປັນຍາ ຈະບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄຳແນະນຳ ກ່ຽວກັບຄວາມເປັນໄປໄດ້ວ່າແບບຜັງວົງຈອນລວມນັ້ນສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້, ແຕ່ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ສາມາດຍື່ນຄຳຮ້ອງຂໍຄົ້ນຫາແບບຜັງວົງຈອນລວມ ຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ເພື່ອໃຫ້ຮູ້ວ່າແບບຜັງວົງຈອນລວມ ທີ່ຂໍຄົ້ນຫານັ້ນໄດ້ຈົດທະບຽນແລ້ວ ຫຼື ບໍ່ ໂດຍຕ້ອງລະບຸຂໍ້ມູນເບື້ອງຕົ້ນ ເຊັ່ນ ຫົວຂໍ້ຂອງແບບຜັງ ຫຼື ວົງຈອນລວມ ທີ່ຕ້ອງການຄົ້ນຫາພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 13 ການກວດສອບເບື້ອງຕົ້ນ**

ພາຍຫຼັງທີ່ກົມຊັບສິນທາງປັນຍາ ໄດ້ໃຫ້ເລກທີຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມແລ້ວ ກົມຕ້ອງດຳເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງຂອງສຳນວນຄຳຮ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 7, 8, 9, 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນ ຕ້ອງດຳເນີນການພາຍໃນຫົກສິບວັນ ນັບແຕ່ວັນຮັບຄຳຮ້ອງເປັນຕົ້ນໄປ.

ກໍລະນີ ສຳນວນຄຳຮ້ອງຫາກບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້, ກົມຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນສະໜອງເອກະສານ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວພາຍໃນຫົກສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນ ບໍ່ສາມາດປະຕິບັດພາຍໃນກຳນົດເວລາດັ່ງກ່າວ ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ກ່ຽວຊາບວ່າຄຳຮ້ອງດັ່ງກ່າວ ຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

ຖ້າຫາກສຳນວນຄຳຮ້ອງ ສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 14 ການເຜີຍແຜ່ຄຳຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ພາຍຫຼັງສຳເລັດການກວດສອບເບື້ອງຕົ້ນສຳນວນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ພາຍໃນ ສິບຫ້າວັນ, ການເຜີຍແຜ່ຕ້ອງປະກອບຂໍ້ມູນ ດັ່ງນີ້:

1. ຫົວຂໍ້ຂອງແບບຜັງວົງຈອນ;
2. ປະເພດຂອງແບບຜັງວົງຈອນລວມ ໃຫ້ອີງໃສ່ແອັບພລີເຄຊັ່ນ (Application) ໃນຮູບແບບຂອງອານາລັອກ (Analog) ແລະ ດິຈິຕອນ (Digital);
3. ແຜນວາດ ຫຼື ຮູບຖ່າຍແຜນວາດ ຂອງແບບຜັງວົງຈອນລວມ;

4. ບົດອະທິບາຍໂດຍສັງເຂບ ກ່ຽວກັບການນໍາໃຊ້ໃນທາງການຄ້າ ແລະ ບົດອະທິບາຍ ກ່ຽວກັບການເຮັດໜ້າທີ່ທາງດ້ານເອເລັກໂຕຣນິກຂອງວົງຈອນລວມ;

5. ເລກທີ ແລະ ວັນທີຍື່ນຄໍາຮ້ອງ;

6. ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄໍາຮ້ອງດັ່ງກ່າວ ຕາມທີ່ກໍານົດໄວ້ໃນວັກທີ 3 ມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນ ຫົກສິບວັນ ນັບແຕ່ວັນທີ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ໂດຍປະກອບເອກະສານຕາມແບບພິມ ຂອງ ກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ສໍານວນຄໍາສະເໜີຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາສະເໜີຂໍຄັດຄ້ານ ຄໍາຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມ;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

**ມາດຕາ 15 ການດັດແກ້ຄໍາຮ້ອງ**

ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ສາມາດດັດແກ້ຄໍາຮ້ອງ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ໃນໄລຍະພິຈາລະນາຄໍາຮ້ອງ ກ່ອນໜ້າການຈົດທະບຽນແບບຜັງວົງຈອນລວມ, ກ່ອນການສະຫຼະສິດ, ກ່ອນການປະຕິເສດຂັ້ນສຸດທ້າຍ ຫຼື ກ່ອນການສິ້ນສຸດການດໍາເນີນການອື່ນໆ ກ່ຽວກັບຄໍາຮ້ອງນັ້ນ ຕາມທີ່ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ຊຶ່ງການດັດແກ້ດັ່ງກ່າວ ຕ້ອງບໍ່ເພີ່ມຂໍ້ມູນທາງດ້ານເຕັກນິກໃໝ່ເກີນຂອບເຂດຂອງຄໍາຮ້ອງສະບັບເດີມ ຫຼື ປ່ຽນແປງລັກສະນະຕົ້ນຕໍຂອງແບບຜັງວົງຈອນລວມ ຫຼື ຕ້ອງບໍ່ເປັນການນໍາໃຊ້ຂໍ້ມູນເຕັກນິກໃໝ່ ທີ່ບໍ່ໄດ້ອ້າງອີງໃນສໍານວນຄໍາຮ້ອງສະບັບເດີມ ໃສ່ຄໍາຮ້ອງທີ່ຍື່ນຄືນໃໝ່ ຕາມທີ່ກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ການແຍກຄໍາຮ້ອງ**

ຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມໃດໜຶ່ງ ສາມາດແຍກອອກເປັນ ສອງ ສະບັບ ຫຼື ຫຼາຍສະບັບໄດ້ທຸກເວລາແຕ່ຕ້ອງດໍາເນີນກ່ອນການອອກໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ, ກ່ອນການປະຕິເສດຂັ້ນສຸດທ້າຍ, ກ່ອນການສະຫຼະສິດ ຫຼື ການສິ້ນສຸດການດໍາເນີນການອື່ນ ກ່ຽວກັບຄໍາຮ້ອງນັ້ນ. ການຍື່ນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ທີ່ຖືກແຍກອອກມານັ້ນ ຕ້ອງອ້າງອີງໃສ່ຄໍາຮ້ອງສະບັບເດີມທີ່ຍື່ນໃນເບື້ອງຕົ້ນ ແລະ ອະທິບາຍວ່າຄໍາຮ້ອງທີ່ຍື່ນມາໃໝ່ນັ້ນ ໄດ້ແຍກອອກມາຈາກຄໍາຮ້ອງສະບັບເດີມ ໂດຍລະບຸ ເລກທີ ແລະ ວັນທີຍື່ນຄໍາຮ້ອງສະບັບເດີມ ໃສ່ຄໍາຮ້ອງທີ່ຍື່ນມາໃໝ່ແຕ່ລະສະບັບ. ສໍາລັບຄໍາຮ້ອງສະບັບໃໝ່, ການດັດແກ້ ຕ້ອງບໍ່ປ່ຽນແປງເນື້ອໃນຫຼັກທີ່ໄດ້ເປີດເຜີຍໃນຄໍາຮ້ອງສະບັບເດີມ, ຄໍາຮ້ອງທີ່ແຍກອອກມານັ້ນ ຕ້ອງຍື່ນພ້ອມກັບຄໍາຮ້ອງສະບັບເດີມທີ່ຖືກດັດແກ້ ຕາມທີ່ກໍານົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

ຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ມີສິດໄດ້ຮັບວັນທີຍື່ນຄໍາຮ້ອງ ຕາມຄໍາຮ້ອງສະບັບເດີມ ຊຶ່ງຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

**ມາດຕາ 17 ການຈົດທະບຽນແບບຜັງວົງຈອນລວມ**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ ແລະ ລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ, ພາຍຫຼັງທີ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນແບບຜັງວົງຈອນລວມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 18 ການເຜີຍແຜ່ຜົນຂອງການຈົດທະບຽນແບບຜັງວົງຈອນລວມ**

ພາຍຫຼັງການຈົດທະບຽນແບບຜັງວົງຈອນລວມແລ້ວ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ສາມາດສະເໜີຕໍ່ກົມຊັບສິນທາງປັນຍາ ເພື່ອດັດແກ້ຂໍ້ຜິດພາດ ແລະ ເຜີຍແຜ່ຂໍ້ມູນທີ່ຖືກຕ້ອງຄືນໃໝ່ ພາຍໃນ ຫົກສິບ ວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ.

## ໝວດທີ 3
## ການດຳເນີນການຫຼັງການຈົດທະບຽນແບບຜັງວົງຈອນລວມ

**ມາດຕາ 19 ການປ່ຽນແປງຂໍ້ມູນຫຼັງການຈົດທະບຽນແບບຜັງວົງຈອນລວມ**

ເຈົ້າຂອງແບບຜັງວົງຈອນລວມ ສາມາດຍື່ນຄຳຮ້ອງ ຢູ່ກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນ ກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງແບບຜັງວົງຈອນລວມ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ.

**ມາດຕາ 20 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ**

ເຈົ້າຂອງແບບຜັງວົງຈອນລວມ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ ເພື່ອນຳໃຊ້ເປັນຫຼັກຖານ ໃນການດຳເນີນຄະດີຢູ່ສານປະຊາຊົນ, ຈົດທະບຽນແບບຜັງວົງຈອນລວມ ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ ຫຼື ຕໍ່ອາຍຸ, ເສຍຫາຍ ຫຼື ຊອກບໍ່ເຫັນ ຊຶ່ງຕ້ອງຍື່ນຄຳຮ້ອງ ຢູ່ກົມຊັບສິນທາງປັນຍາ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 21 ການດັດແກ້ພາຍຫຼັງການຈົດທະບຽນ**

ພາຍຫຼັງແບບຜັງວົງຈອນລວມ ໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງແບບຜັງວົງຈອນລວມ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນແບບຜັງວົງຈອນລວມ. ສຳລັບການຂໍດັດແກ້ບາງຂໍ້ຜິດພາດ ໃນສຳນວນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ທີ່ເກີດຈາກຜູ້ຮ້ອງຂໍເອງ ຕ້ອງຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາ ອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍເທົ່ານັ້ນ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ.

**ມາດຕາ 22 ການຍົກເລີກ ຫຼື ລົບລ້າງ ການຈົດທະບຽນແບບຜັງວົງຈອນລວມ**

ບຸກຄົນທີສາມ ມີສິດຍື່ນຄຳຮ້ອງຂໍຍົກເລີກ ຫຼື ລົບລ້າງ ການຈົດທະບຽນແບບຜັງວົງຈອນລວມ ພາຍໃນ ຫ້າປີ ນັບແຕ່ວັນເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ ເປັນຕົ້ນໄປ ຕາມທີ່ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກ ຫຼື ລົບລ້າງ ການຈົດທະບຽນແບບຜັງວົງຈອນລວມ ຕ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງແບບຜັງວົງຈອນລວມຊາບ ພາຍຫຼັງໄດ້ຮັບຄຳຮ້ອງຂໍຍົກເລີກຈາກບຸກຄົນທີສາມ.

ເຈົ້າຂອງແບບຜັງວົງຈອນລວມ ສາມາດຍື່ນຄຳຊີ້ແຈງ ຢູ່ກົມຊັບສິນທາງປັນຍາ ພາຍໃນ ຫົກສິບ ວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກ ຫຼື ລຶບລ້າງ ແບບຜັງວົງຈອນລວມ ແລະ ແຈ້ງໃຫ້ເຈົ້າຂອງແບບຜັງວົງຈອນລວມຊາບ ຖ້າຫາກເຈົ້າຂອງແບບຜັງວົງຈອນລວມ ຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າເຈົ້າຂອງແບບຜັງວົງຈອນລວມນັ້ນ ຍິນຍອມຕໍ່ການຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມຂອງຕົນ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມ ກໍລະນີ ທີ່ບຸກຄົນທີສາມ ຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກ ຫຼື ລຶບລ້າງ ການຈົດທະບຽນແບບຜັງວົງຈອນລວມ ຕາມທີ່ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມໃຫ້ເຈົ້າຂອງແບບຜັງວົງຈອນລວມ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ ແລະ ຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ.

**ມາດຕາ 23 ອາຍຸການປົກປ້ອງ**

ແບບຜັງວົງຈອນລວມ ມີອາຍຸການປົກປ້ອງ ສິບສອງ ປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ. ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບຜັງວົງຈອນລວມ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ເບື້ອງຕົ້ນລ່ວງໜ້າ ສອງປີ.

**ມາດຕາ 24 ການຮັກສາອາຍຸການປົກປ້ອງ**

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບຜັງວົງຈອນລວມ ສາມາດຂໍຮັກສາອາຍຸການປົກປ້ອງໄດ້ ເທື່ອລະປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸການປົກປ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.

ກ່ອນວັນໝົດອາຍຸແຕ່ລະຄັ້ງ ເຈົ້າຂອງແບບຜັງວົງຈອນລວມ ສາມາດຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ໃນການຮັກສາອາຍຸການປົກປ້ອງ ພາຍໃນ ຫົກ ເດືອນ, ຊຶ່ງກົມຊັບສິນທາງປັນຍາ ຈະບໍ່ອອກແຈ້ງການໃຫ້ເຈົ້າຂອງແບບຜັງວົງຈອນລວມມາຈ່າຍຄ່າທຳນຽມ ແລະ ຄ່າບໍລິການ. ກົມຈະແຈ້ງໃຫ້ເຈົ້າຂອງຊາບພຽງແຕ່ວ່າແບບຜັງວົງຈອນລວມນັ້ນ ໄດ້ໝົດອາຍຸການນຳໃຊ້ແລ້ວ ຍ້ອນບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການຮັກສາອາຍຸການ.

ກໍລະນີ ເຈົ້າຂອງແບບຜັງວົງຈອນລວມ ບໍ່ໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມເວລາທີ່ກຳນົດໄວ້ ກົມຊັບສິນທາງປັນຍາ ສາມາດເລື່ອນເວລາໃນການຈ່າຍອອກໄປອີກ ຫົກ ເດືອນ ນັບແຕ່ວັນໝົດອາຍຸຂອງການຮັກສາອາຍຸການປົກປ້ອງ ແຕ່ຕ້ອງໄດ້ຈ່າຍຄ່າປັບໃໝສຳລັບຄວາມລ່າຊ້າ.

**ມາດຕາ 25 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງແບບຜັງວົງຈອນລວມ ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ດ້ວຍການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ກໍລະນີ ມີການໂອນສິດ ຕໍ່ແບບຜັງວົງຈອນລວມ ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງ ກ່ຽວກັບການໂອນສິດໃຫ້ກົມຊັບສິນທາງປັນຍາຊາບຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ. ກົມຕ້ອງບັນທຶກການໂອນສິດ ເຂົ້າໃນຖານຂໍ້ມູນ, ປຶ້ມບັນທຶກການຈົດທະບຽນ, ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ ແລະ ອອກໃບຢັ້ງຢືນການໂອນສິດໃຫ້ແກ່ຜູ້ຮັບໂອນສິດ. ຖ້າຜູ້ທີ່ໄດ້ຮັບໂອນສິດ ຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສົ່ງສຳເນົາເອກະສານດັ່ງກ່າວໃຫ້ຜູ້ໂອນສິດ.

ກໍລະນີ ທີ່ມີການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບແບບຜັງວົງຈອນລວມ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດດັ່ງກ່າວ. ຖ້າຫາກບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ຖືວ່າເປັນການໂອນສິດທັງໝົດຕໍ່ແບບຜັງວົງຈອນລວມຂອງນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ.

ຖ້າຫາກຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໄສ ກົມຊັບສິນທາງປັນຍາ ສາມາດແຈ້ງຂໍໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ແຈ້ງການໂອນສິດນັ້ນ ສະໜອງຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

**ມາດຕາ 26 ການອະນຸຍາດນຳໃຊ້**

ເຈົ້າຂອງສິດຕໍ່ແບບຜັງວົງຈອນລວມ ສາມາດອະນຸຍາດໃຫ້ບຸກຄົນອື່ນ ນຳໃຊ້ແບບຜັງວົງຈອນລວມຂອງຕົນ ບາງສ່ວນ ຫຼື ທັງໝົດ ເພື່ອຫາຜົນປະໂຫຍດຈາກສິດ ຊຶ່ງສາມາດເຮັດສັນຍາການອະນຸຍາດນຳໃຊ້ ແຕ່ບໍ່ຖືເປັນການໂອນກຳມະສິດແບບຜັງວົງຈອນລວມ ຕາມທີ່ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບຜັງວົງຈອນລວມ ໃຫ້ຖືວ່າການອະນຸຍາດນຳໃຊ້ນັ້ນ ຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານການໂອນກຳມະສິດ.

ກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນ ທີ່ໄດ້ຮັບການອະນຸຍາດນຳໃຊ້ແບບຜັງວົງຈອນລວມດັ່ງກ່າວ, ສັນຍາການອະນຸຍາດນຳໃຊ້ແບບຜັງວົງຈອນລວມ ໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນຳໃຊ້.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນແບບຜັງວົງຈອນລວມ ແລະ ດຳເນີນການອື່ນ

**ມາດຕາ 27 ການເປັນຜູ້ຕາງໜ້າໃນການຈົດທະບຽນແບບຜັງວົງຈອນລວມ ແລະ ດຳເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າໃນການຈົດທະບຽນແບບຜັງວົງຈອນລວມ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ບຸກຄົນໃດໜຶ່ງ ທີ່ໄດ້ຮ່ວມອອກແບບ ແລະ ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ກໍລະນີ ອອກແບບຮ່ວມກັນຫຼາຍຄົນ ໃບມອບສິດຕ້ອງມີລາຍເຊັນຂອງໝົດທຸກຄົນ ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງ ຫາກເສຍຊີວິດ;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ຢູ່ ສປປ ລາວ;
3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນແບບຜັງວົງຈອນ ຫຼື ຜູ້ມອບສິດ. ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ບໍ່ສອດຄ່ອງກັບກົດໝາຍ ຫຼື ລະບຽບການ.

**ມາດຕາ 28 ການມອບສິດໃຫ້ເປັນຜູ້ຕາງໜ້າ**

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດ ດັ່ງນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍ ໃຫ້ດຳເນີນການໃດໜຶ່ງທີ່ກ່ຽວຂ້ອງ ຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;
3. ໄລຍະເວລາ.

ໃບມອບສິດໜຶ່ງ ຕ້ອງນຳໃຊ້ສະເພາະແຕ່ຄຳຮ້ອງດຽວເທົ່ານັ້ນ ຊຶ່ງຕ້ອງລະບຸຫົວຂໍ້ຂອງແບບຜັງວົງຈອນທີ່ກ່ຽວຂ້ອງ.

ຖ້າຫາກມີການປ່ຽນຜູ້ຕາງໜ້າ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ເປັນລາຍລັກອັກສອນ ຕາມແບບພິມທີ່ກົມກຳນົດໄວ້.

ກໍລະນີ ໃບມອບສິດບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນ ຫາກສຳເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຖ້າຫາກຜູ້ອອກໃບມອບສິດ ເປັນນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນ ໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

ກໍລະນີ ຜູ້ອອກແບບຮ່ວມກັນຫຼາຍຄົນ ຫາກມີຜູ້ໃດໜຶ່ງປະຕິເສດບໍ່ລົງລາຍເຊັນໃນໃບມອບສິດ ເພື່ອດຳເນີນການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຖືວ່າໃບມອບສິດດັ່ງກ່າວ ບໍ່ມີຜົນບັງຄັບໃຊ້.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານແບບຜັງວົງຈອນລວມ

### ມາດຕາ 29 ການຈັດຕັ້ງປະຕິບັດວຽກງານແບບຜັງວົງຈອນລວມ

ການຈັດຕັ້ງປະຕິບັດວຽກງານແບບຜັງວົງຈອນລວມ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແບ່ງອອກເປັນ ສອງ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນທ້ອງຖິ່ນ ແມ່ນ ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫຼວງ.

### ມາດຕາ 30 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຜັງວົງຈອນລວມ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານແບບຜັງວົງຈອນລວມ;
3. ພິຈາລະນາສຳນວນຄຳຮ້ອງຂໍຈົດທະບຽນ, ຮັກສາອາຍຸການ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ ແລະ ການສະເໜີອື່ນໆ ກ່ຽວກັບວຽກງານແບບຜັງວົງຈອນລວມ;
4. ອອກໃບຢັ້ງຢືນຈົດທະບຽນແບບຜັງວົງຈອນລວມ, ແຈ້ງປະຕິເສດ, ຍົກເລີກ ຫຼື ລົບລ້າງ ແລະ ອື່ນໆ ກ່ຽວກັບວຽກງານແບບຜັງວົງຈອນລວມ;
5. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບວຽກງານແບບຜັງວົງຈອນລວມ;
6. ໃຫ້ບໍລິການ ການກວດຄົ້ນແບບຜັງວົງຈອນລວມ ໃນລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄຳຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບວຽກງານແບບຜັງວົງຈອນລວມ;
8. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານແບບຜັງວົງຈອນລວມ;
9. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມ ກ່ຽວກັບວຽກງານແບບຜັງວົງຈອນລວມ;
10. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບວຽກງານແບບຜັງວົງຈອນລວມ;

11. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບອຽກງານແບບຜັງວົງຈອນລວມ ໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບອຽກງານແບບຜັງວົງຈອນລວມ;

2. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມ ກ່ຽວກັບອຽກງານແບບຜັງວົງຈອນລວມ;

3. ມອບໝາຍຄວາມຮັບຜິດຊອບ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;

4. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບອຽກງານແບບຜັງວົງຈອນລວມ ໃຫ້ກົມຊັບສິນທາງປັນຍາ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍແບບຜັງວົງຈອນລວມ ສະບັບເລກທີ 0437/ອຄ, ລົງວັນທີ 30 ມີນາ 2023.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ